**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ລັດຖະບານ** ເລກທີ 257 /ລບ

ນະຄອນຫຼວງວຽງຈັນ, ວັນທີ 23.08.2023

# ດຳລັດ
# ວ່າດ້ວຍກອງທຶນຊ່ວຍເຫຼືອສຸກເສີນ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍວຽກງານກາແດງລາວ ສະບັບເລກທີ 28/ສພຊ, ລົງວັນທີ 31 ຕຸລາ 2017;
- ອີງຕາມ ໜັງສືສະເໜີ ຂອງອົງການກາແດງແຫ່ງຊາດລາວ ສະບັບເລກທີ 0195/ກດລ, ລົງວັນທີ 07 ສິງຫາ 2023.

## ລັດຖະບານ ອອກດຳລັດ
## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບການ ຄຸ້ມຄອງ, ນຳໃຊ້ ແລະ ຕິດຕາມ ກວດກາ ກອງທຶນຊ່ວຍເຫຼືອສຸກເສີນ ເພື່ອໃຫ້ກອງທຶນດັ່ງກ່າວ ເຄື່ອນໄຫວຖືກຕ້ອງ, ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ສະໜອງທຶນເຂົ້າໃນການຊ່ວຍເຫຼືອສຸກເສີນດ້ານມະນຸດສະທຳ ແກ່ຜູ້ທີ່ຖືກເຄາະຮ້າຍ ຢ່າງຮີບດ່ວນ ແລະ ທັນການ.

### ມາດຕາ 2 ກອງທຶນຊ່ວຍເຫຼືອສຸກເສີນ

ກອງທຶນຊ່ວຍເຫຼືອສຸກເສີນ ຂຽນຫຍໍ້ວ່າ “**ກທຊສ**”, ຂຽນເປັນພາສາອັງກິດວ່າ “**Emergency Relief Fund**” “**ERF**” ແມ່ນກອງທຶນທີ່ສ້າງຂຶ້ນ ເພື່ອສະສົມ ແລະ ລະດົມທຶນຈາກແຫຼ່ງຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ, ແນໃສ່ຮັບປະກັນໃຫ້ມີງົບປະມານພຽງພໍ ແລະ ຍືນຍົງ ເພື່ອນຳໃຊ້ເຂົ້າໃນວຽກງານຊ່ວຍເຫຼືອສຸກເສີນດ້ານມະນຸດສະທຳ ແກ່ຜູ້ຖືກເຄາະຮ້າຍ ທາງດ້ານຮ່າງກາຍ, ຊີວິດ, ຈິດໃຈ ແລະ ຊັບສິນ ຈາກໄພພິບັດທາງທຳມະຊາດ ຫຼື ມະນຸດສ້າງຂຶ້ນ ຢ່າງຮີບດ່ວນ, ທັນການ, ມີປະສິດທິພາບ ແລະ ປະສິດທິຜົນ.

### ມາດຕາ 3 ການອະທິບາຍສັບ

ຄຳສັບທີ່ໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ຖືກເຄາະຮ້າຍ** ໝາຍເຖິງ ຜູ້ທີ່ໄດ້ຮັບຜົນກະທົບ ຫຼື ຜົນເສຍຫາຍ ທາງດ້ານ ຮ່າງກາຍ, ຊີວິດ, ຈິດໃຈ ແລະ ຊັບສິນ ຈາກໄພພິບັດທາງທຳມະຊາດ ຫຼື ມະນຸດສ້າງຂຶ້ນ;

2. **ການຊ່ວຍເຫຼືອສຸກເສີນ** ໝາຍເຖິງ ການຕອບໂຕ້ ແລະ ແກ້ໄຂ ຜົນກະທົບຈາກໄພພິບັດເບື້ອງຕົ້ນ ດ້ວຍການກູ້ໄພສຸກເສີນ ແລະ ການບັນເທົາທຸກສຸກເສີນ;

3. **ການກູ້ໄພສຸກເສີນ** ໝາຍເຖິງ ການລົງພື້ນທີ່ເກີດເຫດໃນການຊ່ວຍເຫຼືອຮີບດ່ວນ ເພື່ອກອບກູ້, ຊ່ວຍເຫຼືອ ແລະ ປະຖົມພະຍາບານທາງດ້ານ ຮ່າງກາຍ ແລະ ຈິດໃຈ ຜູ້ຖືກເຄາະຮ້າຍ ຈາກໄພພິບັດທາງທຳມະຊາດ ຫຼື ມະນຸດສ້າງຂຶ້ນ ເປັນຕົ້ນ ອຸບປະຕິເຫດທາງຖະໜົນ, ທາງອາກາດ, ທາງນໍ້າ, ອຸທົກກະໄພ, ອັກຄີໄພ, ວາຕະໄພ, ດິນເຈື່ອນ, ຕຶກຖະຫຼົ່ມ, ແຜ່ນດິນໄຫວ, ພະຍາດລະບາດ;

4. **ການບັນເທົາທຸກສຸກເສີນ** ໝາຍເຖິງ ການລົງພື້ນທີ່ເກີດເຫດ ເພື່ອຊ່ວຍເຫຼືອບັນເທົາທຸກເບື້ອງຕົ້ນ ດ້ວຍການແຈກຢາຍ ເຄື່ອງອຸປະໂພກ, ບໍລິໂພກ ທີ່ຈຳເປັນ ພ້ອມທັງ ໃຫ້ການບັນເທົາທຸກທາງດ້ານຈິດໃຈ ແກ່ຜູ້ຖືກເຄາະຮ້າຍ ຈາກໄພພິບັດທາງທຳມະຊາດ ຫຼື ມະນຸດສ້າງຂຶ້ນ ຢ່າງຮີບດ່ວນ.

**ມາດຕາ 4 ຫຼັກການຄຸ້ມຄອງ ແລະ ນຳໃຊ້**

ການຄຸ້ມຄອງ ແລະ ນຳໃຊ້ ກທຊສ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ລວມສູນ ແລະ ເປັນເອກະພາບ ຕາມລະບົບບັນຊີແຫ່ງລັດ;
2. ຮັບປະກັນ ການນຳໃຊ້ກອງທຶນ ໃຫ້ຖືກຕ້ອງຕາມເປົ້າໝາຍ, ປະຢັດ, ມີປະສິດທິພາບ ແລະ ຍືນຍົງ;
3. ມີຄວາມຄ່ອງຕົວ, ວ່ອງໄວ, ຍຸຕິທຳ, ໂປ່ງໃສ, ເປີດເຜີຍ ແລະ ສາມາດກວດສອບໄດ້;
4. ທຸກລາຍຮັບ, ລາຍຈ່າຍ ຕ້ອງຜ່ານລະບົບບັນຊີ ພ້ອມທັງມີການຕິດຕາມ, ກວດກາ ແລະ ການກວດສອບ ຢ່າງເປັນປົກກະຕິ ຕາມກົດໝາຍ.

**ມາດຕາ 5 ຂອບເຂດການນຳໃຊ້ດຳລັດ**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ ທັງພາກລັດ ແລະ ເອກະຊົນ ທີ່ເຄື່ອນໄຫວ ແລະ ພົວພັນກັບ ກທຊສ ຢູ່ ສປປ ລາວ.

## ໝວດທີ 2
## ແຫຼ່ງລາຍຮັບ ແລະ ການນຳໃຊ້ ກອງທຶນຊ່ວຍເຫຼືອສຸກເສີນ

**ມາດຕາ 6 ແຫຼ່ງລາຍຮັບຂອງກອງທຶນຊ່ວຍເຫຼືອສຸກເສີນ**

ແຫຼ່ງລາຍຮັບ ກທຊສ ໄດ້ມາຈາກ:

1. ການປະກອບສ່ວນຂອງລັດ;
2. ການປະກອບສ່ວນດ້ວຍຄວາມສະໝັກໃຈ ຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;
3. ການເຄື່ອນໄຫວທາງດ້ານວິຊາການ ແລະ ການຈັດກິດຈະກຳລະດົມທຶນ;
4. ດອກເບ້ຍເງິນຝາກ ແລະ ລາຍຮັບຈາກການບໍລິຫານ ກທຊສ;
5. ລາຍຮັບອື່ນ ທີ່ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 7 ເປົ້າໝາຍການນຳໃຊ້ກອງທຶນຊ່ວຍເຫຼືອສຸກເສີນ**

ກທຊສ ໃຫ້ນຳໃຊ້ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ການກູ້ໄພສຸກເສີນ;
2. ການບັນເທົາທຸກສຸກເສີນ;
3. ການກຽມຄວາມພ້ອມຊ່ວຍເຫຼືອສຸກເສີນ;
4. ການສ້າງກິດຈະກຳລະດົມທຶນຊ່ວຍເຫຼືອສຸກເສີນ;
5. ການຄຸ້ມຄອງ ແລະ ບໍລິຫານ ກທຊສ;
6. ເປົ້າໝາຍອື່ນ ທີ່ກ່ຽວຂ້ອງກັບວຽກງານຊ່ວຍເຫຼືອສຸກເສີນ ຕາມການຕົກລົງ ຂອງສະພາບໍລິຫານ ກທຊສ.

**ມາດຕາ 8 ການເປີດບັນຊີເງິນຝາກກອງທຶນຊ່ວຍເຫຼືອສຸກເສີນ**

ກທຊສ ຕ້ອງມີລະບົບບັນຊີທີ່ຖືກຕ້ອງ ຕາມກົດໝາຍວ່າດ້ວຍການບັນຊີ ແລະ ສາມາດເປີດບັນຊີເງິນຝາກຢູ່ ຄັງເງິນແຫ່ງຊາດ ແລະ/ຫຼື ທະນາຄານທຸລະກິດ ທີ່ມີຄວາມໝັ້ນຄົງ ແລະ ເຊື່ອຖືໄດ້ ຢູ່ ສປປ ລາວ ຕາມການເຫັນດີຂອງຂະແໜງການການເງິນ. ທຸກແຫຼ່ງລາຍຮັບຂອງ ກທຊສ ຕ້ອງໂອນເຂົ້າໃນບັນຊີເງິນຝາກດັ່ງກ່າວ.

**ມາດຕາ 9 ການເບີກຈ່າຍເງິນກອງທຶນຊ່ວຍເຫຼືອສຸກເສີນ**

ການເບີກຈ່າຍເງິນອອກຈາກບັນຊີເງິນຝາກ ຢູ່ຄັງເງິນແຫ່ງຊາດ ຫຼື ທະນາຄານທຸລະກິດ ຕ້ອງປະຕິບັດຕາມ ແຜນງານ, ໂຄງການ ແລະ ກິດຈະກຳ ທີ່ຜ່ານການພິຈາລະນາ ແລະ ອະນຸມັດ ຈາກສະພາບໍລິຫານ ກທຊສ ແລະ ໄດ້ຂຶ້ນແຜນຖືກຕ້ອງ ຕາມການບັນຊີແຫ່ງລັດ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 10 ການຂໍນຳໃຊ້ກອງທຶນຊ່ວຍເຫຼືອສຸກເສີນ**

ເມື່ອມີເຫດສຸກເສີນເກີດຂຶ້ນ ກອງເລຂາ ກທຊສ ສາມາດອະນຸມັດນຳໃຊ້ເງິນ ກທຊສ ເພື່ອໃຫ້ຫ້ອງການ, ອົງການກາແດງ ແຂວງ, ນະຄອນຫຼວງ ຫຼື ຫ້ອງການກາແດງ ເມືອງ, ເທດສະບານ, ນະຄອນ ບ່ອນທີ່ເກີດເຫດການສຸກເສີນ ລົງເກັບກຳຂໍ້ມູນ, ປະເມີນຄວາມເສຍຫາຍ ແລະ ສັງລວມຄວາມຈຳເປັນ ໃນການຊ່ວຍເຫຼືອເບື້ອງຕົ້ນ ເພື່ອສະເໜີໃຫ້ກອງເລຂາ ກທຊສ ພາຍໃນ ຊາວສີ່ ຊົ່ວໂມງ ນັບແຕ່ວັນລົງເກັບກຳຂໍ້ມູນ.

ກອງເລຂາ ກທຊສ ສ້າງແຜນຊ່ວຍເຫຼືອເບື້ອງຕົ້ນ ພາຍໃນ ຊາວສີ່ ຊົ່ວໂມງ ນັບແຕ່ວັນໄດ້ຮັບຂໍ້ມູນເປັນຕົ້ນໄປ ເພື່ອສະເໜີສະພາບໍລິຫານ ກທຊສ ຂັ້ນຂອງຕົນ ພິຈາລະນາ.

ລາຍລະອຽດ ກ່ຽວກັບຂັ້ນຕອນ ແລະ ວິທີການຂໍນຳໃຊ້ ກທຊສ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 11 ການອະນຸມັດນຳໃຊ້ກອງທຶນຊ່ວຍເຫຼືອສຸກເສີນ**

ສະພາບໍລິຫານ ກທຊສ ແຕ່ລະຂັ້ນ ເປັນຜູ້ອະນຸມັດການນຳໃຊ້ ກທຊສ ພາຍໃນ ຊາວສີ່ ຊົ່ວໂມງ ນັບແຕ່ວັນໄດ້ຮັບແຜນການຊ່ວຍເຫຼືອເບື້ອງຕົ້ນ ເປັນຕົ້ນໄປ, ຖ້າເຫັນວ່າ ການສະເໜີຂໍນຳໃຊ້ ກທຊສ ນັ້ນ ຫາກຖືກຕ້ອງ ຕາມເງື່ອນໄຂ ແລະ ເປົ້າໝາຍ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

ໃນກໍລະນີ ກທຊສ ຂັ້ນເມືອງ ຫຼື ຂັ້ນແຂວງ ຫາກບໍ່ມີທຶນພຽງພໍໃນການຊ່ວຍເຫຼືອສຸກເສີນ ເວລາເກີດໄພພິບັດ ໃຫ້ສະພາບໍລິຫານ ກທຊສ ຂັ້ນດັ່ງກ່າວ ສະເໜີສະພາບໍລິຫານ ກທຊສ ຂັ້ນແຂວງ ຫຼື ຂັ້ນສູນກາງພິຈາລະນາອະນຸມັດ.

**ມາດຕາ 12 ການຖອນເງິນກອງທຶນຊ່ວຍເຫຼືອສຸກເສີນ**

ການຖອນເງິນຈາກບັນຊີເງິນຝາກຂອງ ກທຊສ ຕ້ອງມີສອງລາຍເຊັນ ຂອງຜູ້ສັ່ງຈ່າຍ ທີ່ໄດ້ຮັບມອບສິດຈາກສະພາບໍລິຫານ ກທຊສ ແລະ ຕ້ອງຢູ່ໃນແຜນກິດຈະກຳທີ່ໄດ້ຮັບອະນຸມັດ ເທົ່ານັ້ນ.

ການຖອນເງິນຈາກບັນຊີເງິນຝາກ ບໍ່ໃຫ້ເກີນລາຍຮັບທັງໝົດຂອງ ກທຊສ ໃນແຕ່ລະປີງົບປະມານ. ເງິນຂອງ ກທຊສ ບໍ່ສາມາດຖອນໄດ້ທັງໝົດ ແລະ ຕ້ອງຮັກສາໄວ້ ຢ່າງໜ້ອຍ ສິບສ່ວນຮ້ອຍ (10%) ຂອງຈຳນວນເງິນໃນບັນຊີເງິນຝາກ ກທຊສ.

## ໝວດທີ 3
## ການຄຸ້ມຄອງບໍລິຫານກອງທຶນຊ່ວຍເຫຼືອສຸກເສີນ

**ມາດຕາ 13 ທີ່ຕັ້ງຂອງກອງທຶນຊ່ວຍເຫຼືອສຸກເສີນ**

ກທຊສ ແຕ່ລະຂັ້ນ ມີທີ່ຕັ້ງ ດັ່ງນີ້:

1. ຂັ້ນສູນກາງ ຕັ້ງຢູ່ອົງການກາແດງແຫ່ງຊາດລາວ;
2. ຂັ້ນແຂວງ ຕັ້ງຢູ່ອົງການກາແດງ ແຂວງ, ນະຄອນຫຼວງ;
3. ຂັ້ນເມືອງ ຕັ້ງຢູ່ຫ້ອງການກາແດງ ເມືອງ, ເທດສະບານ, ນະຄອນ.

**ມາດຕາ 14 ໂຄງປະກອບການຈັດຕັ້ງຂອງກອງທຶນຊ່ວຍເຫຼືອສຸກເສີນ**

ໂຄງປະກອບການຈັດຕັ້ງຂອງ ກທຊສ ແຕ່ລະຂັ້ນ ມີ ດັ່ງນີ້:

1. ສະພາບໍລິຫານ ກທຊສ;
2. ກອງເລຂາ ກທຊສ.

**ມາດຕາ 15 ສະພາບໍລິຫານກອງທຶນຊ່ວຍເຫຼືອສຸກເສີນ**

ສະພາບໍລິຫານ ກທຊສ ແມ່ນການຈັດຕັ້ງ ທີ່ບໍ່ປະຈຳການ ມີພາລະບົດບາດຮັບຜິດຊອບການເຄື່ອນໄຫວວຽກງານຂອງ ກທຊສ. ສະພາບໍລິຫານ ກທຊສ ປະກອບດ້ວຍ ປະທານ, ຮອງປະທານ ແລະ ຄະນະກຳມະການຈຳນວນໜຶ່ງ ທີ່ມາຈາກພາກສ່ວນທີ່ກ່ຽວຂ້ອງ.

ສະພາບໍລິຫານ ກທຊສ ຂັ້ນສູນກາງ ຖືກແຕ່ງຕັ້ງ ໂດຍນາຍົກລັດຖະມົນຕີ ຕາມການສະເໜີ ຂອງປະທານອົງການກາແດງແຫ່ງຊາດລາວ. ສະພາບໍລິຫານ ກທຊສ ຂັ້ນແຂວງ ຖືກແຕ່ງຕັ້ງ ໂດຍເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຕາມການສະເໜີ ຂອງຫົວໜ້າອົງການກາແດງ ແຂວງ, ນະຄອນຫຼວງ. ສະພາບໍລິຫານ ກທຊສ ຂັ້ນເມືອງ ຖືກແຕ່ງຕັ້ງ ໂດຍເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຕາມການສະໜີຂອງຫົວໜ້າຫ້ອງການກາແດງ ເມືອງ, ເທດສະບານ, ນະຄອນ.

ສະພາບໍລິຫານ ກທຊສ ແຕ່ລະຂັ້ນ ມີອາຍຸການ ຫ້າ ປີ ແລະ ສາມາດຕໍ່ໄດ້ອີກ.

**ມາດຕາ 16 ໂຄງປະກອບບຸກຄະລາກອນຂອງສະພາບໍລິຫານກອງທຶນຊ່ວຍເຫຼືອສຸກເສີນ**

ສະພາບໍລິຫານ ກທຊສ ຂັ້ນສູນກາງ ມີໂຄງປະກອບບຸກຄະລາກອນ ດັ່ງນີ້:

1. ປະທານອົງການກາແດງແຫ່ງຊາດລາວ ເປັນປະທານ;
2. ຮອງປະທານອົງການກາແດງແຫ່ງຊາດລາວ ເປັນຮອງປະທານ ທັງເປັນຜູ້ປະຈຳການ;

3. ຫົວໜ້າກົມງົບປະມານ, ກະຊວງການເງິນ ເປັນຮອງປະທານ;

4. ຫົວໜ້າຫ້ອງການ ອົງການກາແດງແຫ່ງຊາດລາວ ເປັນຄະນະ;

5. ຕາງໜ້າ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຄະນະ;

6. ຕາງໜ້າ ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ເປັນຄະນະ;

7. ຕາງໜ້າຜູ້ຊົງຄຸນວຸດທິກາແດງແຫ່ງຊາດລາວ ເປັນຄະນະ;

8. ຫົວໜ້າຫ້ອງການຂົນຂວາຍແຫຼ່ງທຶນ ແລະ ຊ່ວຍເຫຼືອບັນເທົາທຸກ ເປັນຄະນະ ທັງເປັນຫົວໜ້າກອງເລຂາ.

ສໍາລັບໂຄງປະກອບບຸກຄະລາກອນ ຂອງສະພາບໍລິຫານ ກທຊສ ຂັ້ນແຂວງ ແລະ ຂັ້ນເມືອງ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

ບຸກຄະລາກອນຂອງສະພາບໍລິຫານ ກທຊສ ແຕ່ລະຂັ້ນ ຈະບໍ່ໄດ້ຮັບເງິນເດືອນ ແລະ ຄ່າແຮງງານ ຈາກ ກທສ ໃນການປະຕິບັດໜ້າທີ່ຂອງຕົນ ນອກຈາກເບ້ຍປະຊຸມ ຫຼື ນະໂຍບາຍອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບການຂອງກະຊວງການເງິນ.

**ມາດຕາ 17 ສິດ ແລະ ໜ້າທີ່ ຂອງສະພາບໍລິຫານກອງທຶນຊ່ວຍເຫຼືອສຸກເສີນ**

ສະພາບໍລິຫານ ກທຊສ ແຕ່ລະຂັ້ນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄຸ້ມຄອງ ແລະ ບໍລິຫານ ກທຊສ ລວມທັງຈັດຕັ້ງປະຕິບັດການປຸກລະດົມການຊ່ວຍເຫຼືອສຸກເສີນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ພິຈາລະນາ ແລະ ຮັບຮອງ ກົດລະບຽບພາຍໃນ, ແຜນການເຄື່ອນໄຫວ, ບົດລາຍງານ, ແຜນງົບປະມານປະຈໍາປີຂອງ ກທຊສ;

3. ພິຈາລະນາ ແລະ ຮັບຮອງ ແຜນງານ, ໂຄງການ ແລະ ກິດຈະກໍາຂອງ ກທຊສ;

4. ນໍາພາ ຊີ້ນໍາ ປຸກລະດົມຂົນຂວາຍ ແລະ ຊອກຫາແຫຼ່ງທຶນຈາກ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ;

5. ແຕ່ງຕັ້ງ ກອງເລຂາ ກທຊສ;

6. ພິຈາລະນາ ຮັບຮອງເອົາລະບຽບການກ່ຽວກັບ ການຄຸ້ມຄອງ ແລະ ການເຄື່ອນໄຫວຂອງ ກທຊສ;

7. ຄົ້ນຄວ້າ, ພິຈາລະນາອະນຸມັດການນໍາໃຊ້ ກທຊສ;

8. ສະເໜີ ສະພາບໍລິຫານ ກທຊສ ຂັ້ນເທິງ ພິຈາລະນາ ອະນຸມັດທຶນຊ່ວຍເຫຼືອສຸກເສີນ ໃນກໍລະນີເງິນ ກທຊສ ຂັ້ນຂອງຕົນບໍ່ພຽງພໍ;

9. ຕິດຕາມ, ກວດກາ ແລະ ປະເມີນຜົນ ການນໍາໃຊ້ ກທຊສ ຕາມເປົ້າໝາຍນໍາໃຊ້ ແຜນການ, ແຜນງົບປະມານ ເພື່ອໃຫ້ມີຄວາມໂປ່ງໃສ, ມີປະສິດທິພາບ ແລະ ປະສິດທິຜົນ;

10. ຮັບຮອງຜົນການກວດສອບການເງິນຂອງ ກທຊສ;

11. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານ ກທຊສ ຕໍ່ຂັ້ນເທິງຂອງຕົນ ຢ່າງໜ້ອຍ ປີລະຄັ້ງ;

12. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 18 ກອງປະຊຸມສະພາບໍລິຫານກອງທຶນຊ່ວຍເຫຼືອສຸກເສີນ**

ສະພາບໍລິຫານ ກທຊສ ແຕ່ລະຂັ້ນ ຈັດກອງປະຊຸມສະໄໝສາມັນ ຢ່າງໜ້ອຍປີລະຄັ້ງ. ໃນກໍລະນີຈຳເປັນ ແລະ ຮີບດ່ວນ ກໍສາມາດຈັດກອງປະຊຸມສະໄໝວິສາມັນຂຶ້ນໄດ້ທຸກເວລາ ໂດຍການຮຽກປະຊຸມຂອງປະທານສະພາບໍລິຫານ ກທຊສ ຫຼື ຕາມການສະເໜີຂອງສະມາຊິກສະພາບໍລິຫານ ຢ່າງໜ້ອຍ ໜຶ່ງສ່ວນສາມຂອງຈຳນວນສະມາຊິກທັງໝົດ. ກອງປະຊຸມຈະເປີດຂຶ້ນໄດ້ ກໍຕໍ່ເມື່ອມີສະມາຊິກສະພາບໍລິຫານ ກທຊສ ເຂົ້າຮ່ວມຢ່າງໜ້ອຍ ສອງສ່ວນສາມ ຂອງຈຳນວນສະມາຊິກທັງໝົດ.

ມະຕິກອງປະຊຸມສະພາບໍລິຫານ ກທຊສ ໃຫ້ຖືເອົາຕາມສຽງສ່ວນຫຼາຍ, ໃນກໍລະນີ ມີສຽງເທົ່າກັນ ໃຫ້ຖືເອົາຄຳເຫັນຂອງປະທານເປັນອັນຊີ້ຂາດ, ແຕ່ຄຳເຫັນຂອງສຽງສ່ວນໜ້ອຍກໍຕ້ອງບັນທຶກໄວ້ເປັນຂໍ້ມູນ.

ໃນກໍລະນີ ປະທານສະພາບໍລິຫານບໍ່ຢູ່ ຫຼື ຕິດຂັດ ແມ່ນໃຫ້ຮອງປະທານ ຜູ້ຖືກມອບໝາຍເປັນຜູ້ປະຕິບັດໜ້າທີ່ແທນ.

**ມາດຕາ 19 ກອງເລຂາກອງທຶນຊ່ວຍເຫຼືອສຸກເສີນ**

ກອງເລຂາ ກທຊສ ແມ່ນການຈັດຕັ້ງທີ່ເຮັດໜ້າທີ່ປະຈຳການປົກກະຕິ ແລະ ເປັນເສນາທິການ ໃຫ້ແກ່ສະພາບໍລິຫານ ກທຊສ ໃນການຄຸ້ມຄອງບໍລິຫານ ກທຊສ.

ກອງເລຂາ ກທຊສ ຂັ້ນສູນກາງ ກຳນົດເອົາ ຫ້ອງການຂົນຂວາຍແຫຼ່ງທຶນ ແລະ ຊ່ວຍເຫຼືອບັນເທົາທຸກຂອງອົງການກາແດງແຫ່ງຊາດລາວ ເປັນບ່ອນປະຕິບັດໜ້າທີ່ໃນການຄຸ້ມຄອງບໍລິຫານ ກທຊສ ຊຶ່ງປະກອບດ້ວຍ ຫົວໜ້າ, ຮອງຫົວໜ້າ ໜຶ່ງຫາສອງຄົນ ແລະ ມີພະນັກງານຊ່ວຍວຽກຈຳນວນໜຶ່ງ ຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍສະພາບໍລິຫານ ກທຊສ ແລະ ມີອາຍຸການເທົ່າກັບ ສະພາບໍລິຫານ ກທຊສ.

ສຳລັບ ກອງເລຂາ ສະພາບໍລິຫານ ກທຊສ ຂັ້ນແຂວງ ແລະ ຂັ້ນເມືອງ ໃຫ້ສະພາບໍລິຫານ ກທຊສ ຂັ້ນນັ້ນ ເປັນຜູ້ແຕ່ງຕັ້ງ.

**ມາດຕາ 20 ສິດ ແລະ ໜ້າທີ່ ຂອງກອງເລຂາ**

ກອງເລຂາ ກທຊສ ແຕ່ລະຂັ້ນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ສະພາບໍລິຫານ ກທຊສ ໃນການຄຸ້ມຄອງ ແລະ ບໍລິຫານການເຄື່ອນໄຫວວຽກງານ ແລະ ບັນຊີ-ການເງິນຂອງ ກທຊສ;

2. ຄົ້ນຄ້ວາ, ສ້າງ ກົດລະບຽບພາຍໃນ, ແຜນການເຄື່ອນໄຫວ, ບົດລາຍງານ ແລະ ແຜນງົບປະມານປະຈຳປີ ເພື່ອສະເໜີສະພາບໍລິຫານ ກທຊສ ພິຈາລະນາ;

3. ຄົ້ນຄວ້າ, ສ້າງ ແຜນງານ, ໂຄງການ ແລະ ກິດຈະກຳ ສະເໜີສະພາບໍລິຫານ ກທຊສ ພິຈາລະນາ;

4. ຄົ້ນຄ້ວາ, ສ້າງ ລະບຽບການ ກ່ຽວກັບການຄຸ້ມຄອງ, ບໍລິຫານ ກທຊສ ແລ້ວສະເໜີສະພາບໍລິຫານພິຈາລະນາ;

5. ອະນຸມັດນຳໃຊ້ ກທຊສ ໃນກໍລະນີເກີດເຫດການສຸກເສີນ ຕາມການກຳນົດຂອງສະພາບໍລິຫານ ກທຊສ;

6. ໂຄສະນາ ເຜີຍແຜ່ລະບຽບການ ກ່ຽວກັບ ກທຊສ;

7. ຄຸ້ມຄອງ ແລະ ບໍລິຫານ ການເຄື່ອນໄຫວວຽກງານ ຂອງ ກທຊສ ໃຫ້ສອດຄ່ອງກັບເປົ້າໝາຍດ້ວຍຄວາມໂປ່ງໃສ ແລະ ມີປະສິດທິຜົນ;

8. ສຶກສາ, ຄົ້ນຄວ້າ ວິທີການ ແລະ ຮູບແບບ ໃນການລະດົມທຶນ ຈາກພາຍໃນ ແລະ ຕ່າງປະເທດ ລວມທັງ ຈັດຕັ້ງກິດຈະກຳລະດົມທຶນ ແລະ ຊອກຫາແຫຼ່ງທຶນເຂົ້າ ກທຊສ;

9. ບັນທຶກ, ຈົດຮັບ, ຈົດຈ່າຍ ເງິນ ກທຊສ, ຄຸ້ມຄອງຊັບສິນ, ເງິນ ທີ່ໄດ້ຮັບຈາກການປະກອບສ່ວນ ແລະ ແຫຼ່ງລາຍຮັບຕ່າງໆ ພ້ອມທັງຄຸ້ມຄອງບັນຊີເງິນຝາກຂອງ ກທຊສ ດ້ວຍຄວາມໂປ່ງໃສ ແລະ ສາມາດກວດສອບໄດ້;

10. ເບີກຈ່າຍເງິນ ແລະ ວັດຖຸປະກອນ ເພື່ອສະໜອງໃຫ້ແກ່ການເຄື່ອນໄຫວກິດຈະກຳຕ່າງໆ ຕາມແຜນການທີ່ຖືກຮັບຮອງ;

11. ຕິດຕາມ, ກວດກາ ແລະ ປະເມີນຜົນການນຳໃຊ້ ເງິນ ແລະ ວັດຖຸປະກອນ ຂອງພາກສ່ວນຕ່າງໆ ທີ່ໄດ້ຮັບອະນຸມັດ;

12. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານຊ່ວຍເຫຼືອສຸກເສີນ;

13. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງ ກທຊສ ຕໍ່ສະພາບໍລິຫານ ກທຊສ ຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍຂອງສະພາບໍລິຫານ ກທຊສ.

## ໝວດທີ 4
## ການກວດສອບ, ການກວດກາ ແລະ ການລາຍງານ

### ມາດຕາ 21 ການກວດສອບບັນຊີ

ບັນຊີຂອງ ກທຊສ ແຕ່ລະຂັ້ນ ຕ້ອງໄດ້ຮັບການກວດສອບທຸກປີ ໂດຍອົງການກວດສອບແຫ່ງລັດ. ຜົນການກວດສອບ ຕ້ອງໄດ້ຮັບການຢັ້ງຢືນຈາກສະພາບໍລິຫານ ກທຊສ ແລະ ລາຍງານໃຫ້ອົງການກາແດງລາວຂັ້ນຂອງຕົນ ພ້ອມທັງເຜີຍແຜ່ໃຫ້ສາທາລະນະຊົນຮັບຮູ້ ເພື່ອຄວາມໂປ່ງໃສໃນການນຳໃຊ້ເງິນຂອງ ກທສຊ.

ໃນກໍລະນີ ພົບເຫັນມີການລະເມີດກົດໝາຍ ແລະ ລະບຽບການ, ຜູ້ລະເມີດນັ້ນ ຈະຖືກປະຕິບັດມາດຕະການ ຕາມແຕ່ລະກໍລະນີ ທີ່ກຳນົດໄວ້ໃນກົດໝາຍ.

### ມາດຕາ 22 ການກວດກາ

ການກວດກາ ກທຊສ ແມ່ນ ການປະເມີນຜົນການນຳໃຊ້ ກທຊສ ເພື່ອຮັບປະກັນຄວາມໂປ່ງໃສ, ມີປະສິດທິພາບ, ປະສິດທິຜົນ, ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

ການກວກາ ກທຊສ ແຕ່ລະຂັ້ນ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ກວດກາການຈັດຕັ້ງປະຕິບັດ ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບ ກທຊສ;

2. ແຫຼ່ງລາຍຮັບ, ການຈັດຕັ້ງປະຕິບັດແຜນລາຍຈ່າຍ ຂອງ ກທຊສ;

3. ກວດກາການຈັດຕັ້ງປະຕິບັດວຽກງານ ຂອງກອງເລຂາ ກທຊສ ແລະ ການປະຕິບັດນະໂຍບາຍຕ່າງໆ.

**ມາດຕາ 23 ຮູບການການກວດກາ**

ການກວດກາ ກທຊສ ມີຮູບການ ດັ່ງນີ້:

1. ກວດກາ ຕາມລະບົບປົກກະຕິ ແມ່ນການກວດກາ ທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;

2. ກວດກາ ໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດກາ ນອກແຜນການ ເມື່ອເຫັນວ່າ ມີຄວາມຈຳເປັນ ໂດຍມີການແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ;

3. ການກວດກາ ແບບກະທັນຫັນ ແມ່ນການກວດກາ ໂດຍຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາ ຮູ້ລ່ວງໜ້າ.

ໃນການດຳເນີນການກວດກາ ເຈົ້າໜ້າທີ່ກວດກາ ຕ້ອງປະຕິບັດໜ້າທີ່ໃຫ້ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

**ມາດຕາ 24 ການລາຍງານ**

ກອງເລຂາ ກທຊສ ແຕ່ລະຂັ້ນ ຕ້ອງລາຍງານ ການຄຸ້ມຄອງ ແລະ ນຳໃຊ້ ກທຊສ ລວມທັງ ລາຍຮັບ, ລາຍຈ່າຍ ປະຈຳໄຕມາດ, ຫົກເດືອນ ແລະ ປະຈຳປີ ໃຫ້ສະພາບໍລິຫານ ກທຊສ ຂັ້ນຂອງຕົນ ເພື່ອຮັບຮອງ ແລະ ລາຍງານ ຂັ້ນເທິງຂອງຕົນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 25 ຕາປະທັບ**

ກທຊສ ມີຕາປະທັບເປັນຂອງຕົນເອງ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 26 ການຈັດຕັ້ງປະຕິບັດ**

ອົງການກາແດງແຫ່ງຊາດລາວ ເປັນເຈົ້າການໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 27 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 23 ສິງຫາ 2023 ເປັນຕົ້ນໄປ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

**ສອນໄຊ ສີພັນດອນ**